Division of Vocational Rehabilitation

# ການບໍລິການຜັນປ່ຽນຕໍ່ໄປກ່ອນວຽກ ງານສາມາດຊ່ວຍເຫລືອທ່ານໃຫ້ຕຽມ ພ້ອມສໍາລັບວຽກງານໃນອະນາຄົດ.



ການຄົ້ນຄົ້ວ ຫາວຽກງານ



ການສະມັບສະນູນຊ່ວຍຕົນເອງ



ການຮຽນຮູ້ຢູ່ຕາມ ວຽກງານ





ການປຶກສາການສຶກສາ ຫລັງຈາກຊັ້ນມັດທະຍົມ



ການຝຶກຝົນຄວາມ ຕຽມພ້ອມຢູ່ຕາມ ບ່ອນເຮັດວຽກ

DSHS
WASHINGTON STATE
Department of Social and Health Services

DSHS 22-1697 LA (Rev. 2/25) Laotian

ຮຽນຮູ້ເພີ້ມເຕີມໄດ້ທີ່ dshs.wa.gov/dvr/student-and-youth-vr-transition-services

## ແມ່ນໃຜສາມາດເຂົ້າຮ່ວມ

- ນັກຮຽນອາຍຸ 14-21 ປີ(ຮອດ 22 ປີ)
- ນັກຮຽນຜູ້ທີ່ໄດ້ຮັບການສຶກສາພິເສດໃນໂຄງການ IEP.
- ນັກຮຽນຜູ້ທີ່ໄດ້ຮັບການອຳນວຍຄວາມສະດວກພິເສດໃນແຜນການ 504.
- ນັກຮຽນຜູ້ທີ່ມີຄວາມເສັຽອົງຄະທີ່ຖືກບັນທຶກທາງການແພດ.

## ສິ່ງທີ່ຈະຮູ້ຈັກ

- ການບໍຣິການທີ່ຖືກເອົາໃຫ້ໂດຍອີງຕາມຄວາມຕ້ອງການ,ໃນການປະສານງານນຳ IEP ຂອງນັກຮຽນຫລືເປົ້າຫມາຍວິຊາຊີບຂອງແຜນການຣາຍສະກຸນຫລືຫລັງຈາກນັ້ນ.
- ການບໍຣິການໄດ້ຖືກປະສານງານໃນການຮ່ວມມືນຳຫມວດໂຮງຮຽນທ້ອງຖິ່ນ.

## ຈະຮ້ອງຂໍເອົາການບໍຣິການໄດ້ແນວໃດ

- ໂທຫາຫມວດໂຮງຮຽນທ້ອງຖິ່ນຂອງທ່ານຫລືຫ້ອງການ DVR.
- ຕິດຕໍ່ຫາ Regional Transition Consultant ຂອງທ່ານທາງອອນລາຍນ໌ໄດ້ທີ່ dshs.wa.gov/dvr/regional-transition-consultants.

## ຂະແນງຂອງການບໍຣິການຝັນປ່ຽນຕໍ່ໄປກ່ອນວຽກງານ

**ການຄົ້ນຄ້ວາຫາວຽກງານ** – ຮຽນຮູ້ກ່ຽວກັບວົງການວຽກງານແຕກຕ່າງກັນ,ຄວາມສົນໃຈວຽກງານແນວໃດທີ່ທ່ານມີຢູ່ແລະຄວາມຊຳນານທີ່ທ່ານອາດຈະຕ້ອງມີເພື່ອຈະມີຜົນສຳເຣັດ.

**ການຝຶກຝົນຄວາມຕຽມພ້ອມຢູ່ຕາມບ່ອນເຮັດວຽກ** – ຮຽນຮູ້ກ່ຽວກັບແລະໄດ້ຄວາມຊຳນານມາເພື່ອຈະຕຽມພ້ອມສຳລັບວຽກງານ,ລວມທັງຄວາມຊຳນານໃນການດຳຣົງຊີວິດທີ່ບໍ່ຂຶ້ນນຳໃຜຊຶ່ງກ່ຽວພັນນຳວຽກງານ.

**ການສະນັບສະນູນຊ່ວຍຕົນເອງ** – ຮຽນຮູ້ກ່ຽວກັບແລະໄດ້ຄວາມຊຳນານມາກ່ຽວກັບວ່າຈະສະນັບສະນູນສຳລັບຕົນເອງໄດ້ແນວໃດແລະຮ້ອງຂໍເອົາການອຳນວຍຄວາມສະດວກທີ່ທ່ານອາດຈະຕ້ອງການເພື່ອຈະສຳເຣັດ.

**ການປຶກສາການສຶກສາຫລັງຈາກຊັ້ນມັດທະຍົມ** – ຮຽນຮູ້ແລະໄດ້ຮັບການຊີ້ນຳກ່ຽວກັບທາງເລືອກສຳລັບການສຶກສາແລະການຝຶກຝົນຕໍ່ໄປຫລັງຈາກຣາຍສະກຸນຢູ່ໃນເຣື່ອງຂອງຄວາມສົນໃຈແລະຄວາມສາມາດຂອງທ່ານ.

**ການຮຽນຮູ້ຢູ່ຕາມວຽກງານ** – ໂອກາດທີ່ຈະເຂົ້າຮ່ວມໃນກິຈກັມເພື່ອຈະຮຽນຮູ້ກ່ຽວກັບບ່ອນເຮັດວຽກຢູ່ຕາມຊຸມຊົນຂອງທ່ານ.

*ເງິນທຶນຂອງຣັດແລະຣັດຖະບານກາງໄດ້ຖືກໃຊ້ເພື່ອຈະເອົາການບໍຣິການ DVR ໃຫ້.ໂຄງການ VR ໄດ້ຮັບປະມານ 78 ເປີເຊັນໃນເງິນທຶນຂອງຣັດຖະບານກາງ ແລະ 22 ເປີເຊັນໃນເງິນທຶນຂອງຣັດ. ເພື່ອຣາຍຣະອຽດທີ່ຄົບຖ້ວນກ່ຽວກັບຈຳນວນເງິນຂອງເງິນທຶນຂອງຣັດຖະບານກາງສຳລັບໂຄງການ,ກະຣຸນາແວ່ຢ້ຽມ https://rsa.ed.gov/fiscal/grant-awards.*